ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ.....4572.........../ກງ

ນະຄອນຫລວງວຽງຈັນ, ວັນທີ.....17 ກັນຍາ 2021

# ແຈ້ງການ

**ເຖິງ : - ທ່ານ ຫົວໜ້າ ກົມພາສີ**

**- ທ່ານ ຫົວໜ້າ ພາສີປະຈຳ ແຂວງ, ນະຄອນຫຼວງ ແລະ ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ**

**- ບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນຂອບເຂດທົ່ວປະເທດ**

**ເລື່ອງ : ຢຸດຕິການນຳໃຊ້ລະບອບການນຳເຂົ້າຍ່ອຍ SD4, ລະຫັດເກົ່າ 2 ຕົວເລກ 44 ຢູ່ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ.**

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 144/ນຍ, ລົງວັນທີ 8 ພຶດສະພາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.

ໃນໄລຍະຜ່ານມາ ບັນດາບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໄດ້ມີການນຳໃຊ້ລະບອບການນຳເຂົ້າຍ່ອຍ SD4, ລະຫັດເກົ່າ 2 ຕົວເລກ 44 ຢູ່ບັນດາດ່ານພາສີສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ໃນຂອບເຂດທົ່ວປະເທດ, ໄດ້ສ້າງລາຍຮັບເຂົ້າງົບປະມານຫຼາຍສົມຄວນ, ແຕ່ກໍຍັງເຫັນວ່າການນຳໃຊ້ລະບອບການແຈ້ງເສຍພາສີດັ່ງກ່າວ ຍັງພົບຄວາມຫຍຸ້ງຍາກໃນການຄຸ້ມຄອງ ແລະ ກວດກາການນຳເຂົ້າ. ສະນັ້ນ, ເພື່ອຮັບປະກັນໃຫ້ການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າ, ເຄື່ອງຂອງ ຜ່ານດ່ານພາສີຊາຍແດນ ໃຫ້ມີຄວາມເປັນເອກະພາບ, ຮັດກຸມ, ອັດຊ່ອງຫວ່າງການຮົ່ວໄຫຼຂອງລາຍຮັບ, ຈັດເກັບລາຍຮັບເຂົ້າງົບປະມານໃຫ້ຖືກຕ້ອງ ຄົບຖ້ວນ, ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ.

**ກະຊວງການເງິນ ອອກແຈ້ງການ ດັ່ງນີ້:**

1. ໃຫ້ຢຸດຕິ ການນຳໃຊ້ລະບອບການນຳເຂົ້າຍ່ອຍ SD4, ລະຫັດເກົ່າ 2 ຕົວເລກ 44 ຢູ່ບັນດາດ່ານພາສີຊາຍແດນ (ດ່ານພາສີສາກົນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ) ໃນຂອບເຂດທົ່ວປະເທດ;

2. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄີຍແຈ້ງພາສີ ໃນລະບອບການນຳເຂົ້າຍ່ອຍ SD4, ລະຫັດເກົ່າ 2 ຕົວເລກ 44 ໃຫ້ຫັນມາແຈ້ງພາສີດ້ວຍ ລະບອບ 40 (IM4) ເປັນນິຕິບຸກຄົນ ຊຶ່ງຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:
   - ມີທະບຽນວິສາຫະກິດ;
   - ມີເລກລະຫັດປະຈຳຕົວຜູ້ເສຍອາກອນ (TIN);
   - ມີໃບຢັ້ງຢືນການມອບອາກອນປະຈຳປີ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

- ຖືບັນຊີວິສາຫະກິດຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ ແລະ ເຂົ້າໃນລະບົບອາກອນມູນຄ່າເພີ່ມ;
- ມີລະບົບສາງເກັບມ້ຽນສິນຄ້າທີ່ໄດ້ມາດຕະຖານ ແລະ ມີການສະຫຼຸບຈຳນວນສິນຄ້າເຂົ້າ-ອອກສາງ;
- ໄດ້ຮັບການຝຶກອົບຮົມເປັນ ຜູ້ບໍລິການແຈ້ງພາສີ ຫຼື ຜູ້ແຈ້ງພາສີທົ່ວໄປ ແລະ ຕ້ອງມີບັດອະນຸຍາດແຈ້ງພາສີ (User ID) ທີ່ອອກໃຫ້ໂດຍລັດຖະການພາສີ.

ໃນກໍລະນີ ຫາກບໍ່ສາມາດດຳເນີນການຄົບຕາມເງື່ອນໄຂ ທີ່ກ່າວມາຂ້າງເທິງນີ້ ແມ່ນບໍ່ອະນຸຍາດໃຫ້ດຳເນີນການແຈ້ງພາສີ ຢ່າງເດັດຂາດ; ໃຫ້ຫັນໄປນຳໃຊ້ຜູ້ບໍລິການແຈ້ງພາສີ ທີ່ໄດ້ຮັບອະນຸຍາດ ແລະ ມີການຄ້ຳປະກັນຕໍ່ລັດຖະການພາສີ.

3. ມອບໃຫ້ກົມພາສີ, ພາສີປະຈຳແຂວງ, ນະຄອນຫຼວງ ແລະ ດ່ານພາສີຊາຍແດນ ໃນຂອບເຂດທົ່ວປະເທດ ເປັນເຈົ້າການໃນການຄຸ້ມຄອງ, ຕິດຕາມ, ກວດກາ, ໃຫ້ຄຳແນະນຳ ໃນການຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

4. ແຈ້ງການສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ຕຸລາ 2021 ເປັນຕົ້ນໄປ.

ລັດຖະມົນຕີ

ບຸນໂຈມ ອຸບົນປະເສີດ

ບ່ອນສົ່ງ:

| | | |
|---|---|---|
| 1. | ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກ | 01 ສະບັບ. |
| 2. | ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ | 01 ສະບັບ. |
| 3. | ທ່ານ ຮອງລັດຖະມົນຕີກະຊວງການເງິນ, ທ່ານລະ | 01 ສະບັບ. |
| 4. | ກົມພາສີ, ພາສີປະຈຳ ແຂວງ, ນະຄອນຫຼວງ ແລະ ດ່ານພາສີຊາຍແດນ | 01 ສະບັບ. |
| 5. | ກົມສ່ວຍສາອາກອນ, ສ່ວຍສາອາກອນນະຄອນຫຼວງ, ແຂວງ | 01 ສະບັບ. |
| 6. | ສຳເນົາ | 01 ສະບັບ. |